ລາຍລະອຽດກ່ຽວກັບການຮັບຟັງພິຈາລະນາພິຍາມຫລັກຖານຂອງລັດ

ຜູ້ທີ່ຮ່ວມໃນການຮັບຟັງພິຈາລະນາພິຍາມຫລັກຖານຂອງລັດຖະ ຈະຮວມເຖິງຕົວທ່ານ, ຜູ້ພິພາກສາທາງດ້ານກົດໝາຍບໍລິຫານ (ALJ) ຜູ້ໃດຜູ້ນຶ່ງຈາກກົມປະຊາສົງເຄາະ (Department of Social Services) ແຫ່ງລັດແຄລິຟໍເນັຽ ແລະຜູ້ແທນຂອງຄາວຕີ້ຜູ້ໃດຜູ້ນຶ່ງ. ການນີ້ບໍ່ຄືການດຳເນີນຄະດີຢູ່ສານ ໂດຍທີ່ຈະບໍ່ໃຫ້ປະຊາຊົນເຂົ້າມາເບິ່ງ.

ໃນລະຫວ່າງການຮັບຟັງພິຈາລະນາພິຍາມຫລັກຖານທ່ານສາມາດແຈ້ງໃຫ້ ALJ ຊາບເຖິງເຫດຜົນທີ່ທ່ານບໍ່ເຫັນດ້ວຍກັບຄາວຕີ້. ຜູ້ແທນຂອງຄາວຕີ້ຈະອະທິບາຍເຫດຜົນຂອງການດຳເນີນການ ແລະຈະພະຍາຍາມພິສູດໃຫ້ເຫັນວ່າການດຳເນີນການດັ່ງກ່າວຖືກຕ້ອງ. ທ່ານແລະຜູ້ແທນຂອງຄາວຕີ້ມີສິດທີ່ຈະຊັກຖາມຢ່າງເຊິ່ງກັນແລະກັນ ແລະພິຍານໃດໆ ຂອງຄາວຕີ້ແລະຂອງທ່ານທີ່ໄດ້ເຂົ້າມາຮ່ວມໃນການຮັບຟັງ. ສ່ວນ ALJ ກໍສາມາດຖາມຄຳຖາມໃດໆ ເພື່ອໃຫ້ຂໍ້ເທັດຈິງປາກົດອອກມາໄດ້.

ເມື່ອທ່ານເຂົ້າມາຮ່ວມໃນການຮັບຟັງ ໃຫ້ນຳເອົາເອກະສານໃດໆ ທີ່ຈະພິສູດຫລືໄຕ້ແຍ້ງຂໍ້ເທັດຈິງຕ່າງໆ ທີ່ທ່ານກັບຝ່າຍຄາວຕີ້ບໍ່ເຫັນພ້ອມ. ທ່ານຍັງສາມາດຍື່ນໜັງສືໄດ້ ເພື່ອອະທິບາຍຄວາມຄິດເຫັນຂອງທ່ານ.

ໃນລະຫວ່າງການຮັບຟັງພິຈາລະນາຫລັກຖານ, ຝ່າຍຄາວຕີ້ຈະສະເນີຄຳຢືນຢັນຄວາມຄິດເຫັນ (Statement of Position) ເຊິ່ງເປັນເອກະສານທີ່ໄດ້ຜົນໄວ້ເພື່ອອະທິບາຍເຖິງການດຳເນີນການຂອງຕົນພ້ອມເຫດຜົນ. ທ່ານສາມາດມາຂໍຮັບຄຳຢືນຢັນດັ່ງກ່າວໃນເວລາໃດກໍໄດ້ ພາຍໃນເວລາທີ່ປິດຮັດການກ່ອນວັນທີ່ໄດ້ນັດກັນຮັບຟັງ ເປັນເວລານານເຖິງສອງວັນຮັກການ. ກ່ອນທີ່ຈະເຂົ້າມາ, ທ່ານຄວນໄປຫາໜ່ວຍການອຸດທອນ (Appeals Unit) ຂອງຄາວຕີ້ຂອງທ່ານເພື່ອໃຫ້ແນ່ໃຈວ່າເອກະສານດັ່ງກ່າວໄດ້ຮັບການຕຽມພ້ອມຮຽບຮ້ອຍແລ້ວຫລືບໍ່ງ. ໃນກໍລະນີທີ່ຍັງບໍ່ທັນໄດ້ຕຽມພ້ອມ Statement of Position ຂອງຄາວຕີ້, ຫລືໃນກໍລະນີທີ່ຝ່າຍຄາວຕີ້ ໄດ້ປ່ຽນແປງແຂ້ໄຂເອກະສານດັ່ງກ່າວຫລາຍພໍສົມຄວນຫລັງຈາກໄດ້ມອບສຳເນົາໃຫ້ແກ່ທ່ານ, ທ່ານສາມາດຮ້ອງຂໍໃຫ້ເລື່ອນເວລາທີ່ນັດກັນເຂົ້າມາຮັບຟັງພິຈາລະນາພິຍາມຫລັກຖານໄດ້.

ທ່ານມີສິດທີ່ຈະເຂົ້າມາທົບທວນເອກະສານປະຈຳຄະດີຂອງທ່ານພ້ອມທັງກວດເບິ່ງກົດລະບຽບຕ່າງໆ ກ່ອນທີ່ຈະເຂົ້າມາຮ່ວມໃນການຮັບຟັງພິຈາລະນາພິຍານຫລັກຖານ. ໃຫ້ໄປຫາໜ່ວຍການອຸດທອນຂອງຄາວຕີ້ຂອງທ່ານເພື່ອຈັດໃຫ້ມີການທົບທວນເຊັ່ນນີ້ຂຶ້ນ. ເມື່ອໄດ້ມີການຮ້ອງຂໍ, ຈະມີນາຍພາສາໄວ້ ເພື່ອຊ່ວຍທ່ານໃນການທົບທວນເອກະສານປະຈຳຄະດີທີ່ຂຽນເປັນພາສາອັງກິດ.

ທ່ານສາມາດເຂົ້າມາຮ່ວມໃນການຮັບຟັງ ໂດຍຕົນເອງໄດ້ ຫລືສົ່ງຜູ້ອື່ນອີກຄົນນຶ່ງມາເປັນຜູ້ແທນຂອງທ່ານກໍໄດ້. ຖ້າທ່ານຄິດວ່າທ່ານຈະສົ່ງຜູ້ແທນມາ, ໃຫ້ເຕີມແຈ້ງຟອມ DPA 19 ທີ່ແນບມາພ້ອມນີ້ ແລະສົ່ງຄືນໄປໃຫ້ແກ່ຜະແນກການຮັບຟັງພິຈາລະນາພິຍານຫລັກຖານ (State Hearings Division ຫລື SHD) ກ່ອນວັນນັດກັນເຂົ້າມາຮັບຟັງ. ຖ້າທ່ານບໍ່ມີ ແລະບໍ່ມີໃຜມາເປັນຜູ້ແທນຂອງທ່ານໃນລະຫວ່າງການຮັບຟັງ, ແຕ່ວ່າທ່ານຍັງຕ້ອງການໃຫ້ມີການຮັບຟັງ ອີກ, ທ່ານຈະຕ້ອງຮ້ອງຂໍໃຫ້ເປີດການຮັບຟັງ ເທື່ອໃໝ່ພາຍໃນ 10 ວັນ ນັບຕັ້ງແຕ່ວັນນັດກັນເຂົ້າມາຮັບຟັງ ພ້ອມທັງສະແດງເຫດຜົນອັນສົມຄວນທີ່ທ່ານບໍ່ໄດ້ມາ.

ຖ້າທ່ານໄດ້ແຈ້ງໃຫ້ SHD ຊາບກ່ອນວັນນັດກັນຮັບຟັງ ວ່າ ທ່ານຕ້ອງການຮັບການບໍລິການທາງດ້ານພາສາ, ຈະມີນາຍພາສາໄວ້ເພື່ອຊ່ວຍເຫລືອທ່ານ ແລະຜູ້ອື່ນໃນລະຫວ່າງການຮັບຟັງ ໂດຍທ່ານບໍ່ຕ້ອງເສັຽຄ່າບໍລິການໃດໆ ທັງສິ້ນ.

ກະລຸນາ ໃຫ້ສຳນຶກສະເນີວ່າ ການຊັກຊ້າຍ່ອມເກີດຂຶ້ນໄດ້, ເຊິ່ງອາດເປັນຜົນໃຫ້ການຮັບຟັງ ຂອງທ່ານເລີ່ມຊັກກວ່າທີ່ໄດ້ກຳໝົດໄວ້, ແລະວ່າ ບໍ່ມີການບໍລິການເບິ່ງແຍງດັກນ້ອຍໄວ້ໃນສະຖານທີ່ທີ່ດຳເນີນການຮັບຟັງພິຈາລະນາພິຍານຫລັກຖານ.

ຖ້າທ່ານຈະຍ້າຍບ່ອນຢູ່ຫລັງຈາກທ່ານໄດ້ຮ້ອງຂໍໃຫ້ມີການຮັບຟັງ ອີກ, ແຕ່ກ່ອນທີ່ຈະດຳເນີນການຮັບຟັງ ຫລືອອກຄຳຕັດສິນ, ທ່ານຈະຕ້ອງແຈ້ງໃຫ້ SHD ຊາບບ່ອນຢູ່ໃໝ່ຂອງທ່ານ ໂດຍໂທຕາມເບີຟີ 1-800-743-8525 (ສຽງປາກ/ລະບົບ TDD).

ການເລື່ອນເວລາ

ຖ້າທ່ານມີຄວາມຈຳເປັນຕ້ອງເລື່ອນເວລາທີ່ຈະດຳເນີນການຮັບຟັງ, ທ່ານຈະຕ້ອງໂທໄປຫາ SHD ຕາມເບີບໍລິການຟີທີ່ໄດ້ລະບຸຂ້າງເທິງນີ້ ກ່ອນທີ່ຈະມີການຮັບຟັງ ອີກ ພ້ອມທັງລະບຸເຫດຜົນອັນສົມຄວນສຳຫລັບການເລື່ອນເວລາດັ່ງກ່າວ. ທ່ານບໍ່ຈຳເປັນຕ້ອງແຈ້ງເຫດຜົນເມື່ອຂໍເລື່ອນເວລາເປັນເຫດທຳອິດ ໃນກໍລະນີທີ່ກ່ຽວຂ້ອງກັບຝູດສະແດງ. ຫາກໄດ້ມີການອະນຸມັດຕາມຄຳຮ້ອງຂໍນັ້ນ, ຈະນັດວັນເວລາໃໝ່ສຳຫລັບການຮັບຟັງ ນັ້ນ ແລະຈະມີການຕໍ່ອາຍຸການຊ່ວຍເຫລືອໃດໆ ທີ່ຢູ່ໃນລະຫວ່າງການພິຈາລະນາ.

ການຮັບຟັງພິຈາລະນາພິຍານຫລັກຖານຢູ່ເຮືອນ/ໂດຍທາງໂທລະສັບ

ຖ້າທ່ານບໍ່ສາມາດມາຮ່ວມໃນການຮັບຟັງ ຍ້ອນວ່າສຸຂະພາບບໍ່ດີຫລືເປັນຄົນພິການ, ຈະດຳເນີນການຮັບຟັງພິຈາລະນາພິຍານຫລັກຖານໃນເຮືອນຂອງທ່ານຫລືໂດຍທາງໂທລະສັບກໍໄດ້. ເພື່ອໃຫ້ດຳເນີນການຮັບຟັງ ຕາມເຮືອນທີ່ອາໄສ, ຈະຕ້ອງມີການກວດສອບຫລັກຖານທາງແພດ. ໃນການຮ້ອງຂໍໃຫ້ດຳເນີນການຮັບຟັງ ໃນເຮືອນຫລືໂດຍທາງໂທລະສັບ, ໃຫ້ໂທຫາ SHD ຕາມຫ້ອງການທີ່ລະບຸຂ້າງລຸ່ມນີ້ ແລະເປັນຫ້ອງການທີ່ໃກ້ຕົວທ່ານທີ່ສຸດ ກ່ອນວັນທີ່ກຳໝົດໃຫ້ດຳເນີນການຮັບຟັງ ຢ່າງນ້ອຍ 10 ວັນ ເພື່ອອະທິບາຍເຫດຜົນຂອງທ່ານ, ຫລືຕາມໂທເບີຟີ **1-800-743-8525** (ສຽງປາກ/ລະບົບ TDD).

ຫາກທ່ານບໍ່ໄດ້ມີພູມລຳເນົາໃນມົນລັດແຄລິຟໍເນັຽແລ້ວ, ຈະຈັດການໃຫ້ດຳເນີນການຮັບຟັງພິຈາລະນາຫລັກຖານຂອງທ່ານໂດຍທາງໂທລະສັບ. ຈະມີການສົ່ງຄຳສັ່ງແນະນຳຕ່າງໆ ມາຍັງທ່ານລ່ວງໜ້າກ່ອນດຳເນີນການຮັບຟັງ.

ການສົ່ງໝາຍເກາະ

ຖ້າທ່ານຕ້ອງການມີບຸກຄົນໃດໆ ຫລືເອກະສານໃດໆ ທີ່ມີຄວາມສຳຄັນຕໍ່ຄະດີຂອງທ່ານໃນລະຫວ່າງການຮັບຟັງພິຈາລະນາພິຍານຫລັກຖານຂອງທ່ານ, ທ່ານອາດຮ້ອງຂໍໃຫ້ອອກໝາຍເກາະໄດ້. ເພື່ອຮ້ອງຂໍໃຫ້ອອກໝາຍເກາະກ່ອນວັນນັດກັນຮັບຟັງ, ໃຫ້ໂທຫາຫ້ອງການທີ່ລະບຸຂ້າງລຸ່ມນີ້ແລະຢູ່ໃກ້ຕົວທ່ານຫລາຍກວ່າໝູ່.

ທ່ານ ALJ ທີ່ນັ່ງເປັນປະທານຈະກຳໝົດວ່າສົມຄວນອອກໝາຍເກາະຫລືບໍ່. ທ່ານຈະຕ້ອງຮັບຜິດຊອບໃນການເດີນໝາຍໄປຍັງຜູ້ທີ່ທ່ານຕ້ອງການໃຫ້ຖືກໝາຍເກາະ, ຫລືບຸກຄົນທີ່ມີອຳນາດຄວບຄຸມເອກະສານນັ້ນ (ເຊັ່ນ ທະນາຄານ, ສະຫະພັນເງິນເຊື່ອ ຫລື ໂຮງໝໍ ເປັນຕົ້ນ) ຖ້າທ່ານຕ້ອງການໄດ້ເອກະສານ.

ພາຍຫລັງການຮັບຟັງພິຈາລະນາພິຍານຫລັກຖານ

ຫລັງການຮັບຟັງ, ທ່ານ ALJ ຈະສົ່ງຄຳສະເນີຄຳຕັດສິນໄປຍັງຜູ້ອຳນວຍການ ບໍ່ຢ່າງນັ້ນກໍຈະອອກຄຳສັ່ງດັດຂາດໃນນາມຂອງຜູ້ອຳນວຍການ. ຫາກຄຳຕັດສິນນັ້ນເປັນພຽງແຕ່ຄຳສະເນີ, ຜູ້ອຳນວຍການອາດຈະຍອມຮັບໄດ້, ສັ່ງໃຫ້ມີການຮັບຟັງພິຈາລະນາພິຍານຫລັກຖານອີກຕໍ່ໄປ ຫລືອອກຄຳຕັດສິນຂອງຕົນເອງກໍໄດ້. ຫາກຜູ້ອຳນວຍການຈະອອກຄຳຕັດສິນຂອງຕົນເອງ, ຄຳຕັດສິນນັ້ນຈະເປັນທີ່ຜູກພັນ, ແຕ່ທ່ານຍັງຈະໄດ້ຮັບສຳເນົາຂອງຄຳຕັດສິນທີ່ ALJ ໄດ້ສະເນີ. ຝ່າຍຄາວຕີ້ຈະຕ້ອງປະຕິບັດຕາມຄຳຕັດສິນນັ້ນໂດຍທັນທີໂລດ. ຫາກຄຳຕັດສິນແມ່ນຄຳປະຕິເສດ, ຄວາມຊ່ວຍເຫລືອໃດໆ ທີ່ທ່ານເຄີຍໄດ້ຮັບຈະຊະງັກ ເຂົ້ານຳ. ນອກຈາກນີ້, ທາງຄາວຕີ້ອາດຮ້ອງຂໍໃຫ້ຈ່າຍຄືນສ່ວນເກີນຂອງເງິນສົດຊ່ວຍເຫລືອຫລືຝູດ ສະແດງທີ່ຈ່າຍໃຫ້ຕະຫລອດລະຍະທີ່ຄວາມຊ່ວຍເຫລືອນັ້ນໄດ້ຢູ່ໃນລະຫວ່າງການພິຈາລະນາ. ໜ້າທີ່ທຳອິດ ຂອງຄຳຕັດສິນຂອງທ່ານຈະມີບົດຄວາມກ່າວເຖິງສິດທິທີ່ທ່ານມີຢູ່ໃນການຮ້ອງອຸດທອນ.

ຫ້ອງການຮັບຟັງພິຈາລະນາພິຍານຫລັກຖານຂອງມົນລັດ

- State Hearings Division, 744 P Street, M.S. 19-44, Sacramento, CA 95814 (916-229-4187);
- State Hearings Division, 1515 Clay Street #1203, Oakland, CA 94612 (510-622-4000);
- State Hearings Division, 811 Wilshire Boulevard #1118, Los Angeles, CA 90017 (213-833-2200)
- State Hearings Division, 355 West Grand #4, Escondido, CA 92025 (760-735-5070); or
- State Hearings Division, 2550 Mariposa Mall #3088, Fresno, CA 93721 (559-445-5775).

STATE OF CALIFORNIA
(ລັດແຄລິຟໍເນັຽ)
Arnold Schwarzenegger, ຜູ້ບໍລິຫານມົນລັດ

HEALTH AND HUMAN SERVICES AGENCY
(ຫນ່ວຍງານສາທາລະນະສຸກແລະປະຊາສົງເຄາະ)
Kimberly Belshé, ເລຂາທິການ

DEPARTMENT OF SOCIAL SERVICES
(ກົມປະຊາສົງເຄາະ)

PUB 412 (Lao) (4/04)